**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 12 ກຸມພາ 2017 (02-12-2017)**

---

## ເຕີບໃຫຍ່ຂຶ້ນດ້ວຍຄວາມຍິນດີ

*ດົນປານໃດແລ້ວທີ່ທ່ານຂອບຄຸນພຣະເຈົ້າ ເພາະທ່ານບໍ່ໄດ້ຍົກເລີກ?*

**ຈຸດສຳຄັນໃນບົດຮຽນ**: ມື້ຕໍ່ມື້, ຂ້າພະເຈົ້າສາມາດກັບກາຍຄ້າຍຄືພຣະເຢຊູຫຼາຍຂຶ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ການແລ່ນແຂ່ງຂັນຄວາມອົດທົນ ມາຣາທອນ ເປັນກິລາທີ່ເມື່ອຍຫຼາຍທີ່ສຸດໃນປີໃດກໍຕາມ. ແຕ່ມີຈຳນວນຜູ້ເຂົ້າແຂ່ງແລ່ນຫຼາຍກວ່າສາມໝື່ນຫົກພັນຄົນຊຶ່ງໄດ້ສຳເຣັດຮຽບຮ້ອຍໃນປີ 2014 ໃນການແຂ່ງຂັນທີ່ບອສຕັນ ຣັດແມສຊາຊູເຊັດທີ່ໄດ້ປະເຊີນໜ້າກັບສິ່ງອື່ນຕື່ມອີກ: ນັ້ນຄືອາລົມຄວາມຮູ້ສຶກໃນການແລ່ນແຂ່ງຂັນຄັ້ງປະວັດສາດໃນປີ 2013, ຫຼັງຈາກຜູ້ກໍ່ການຮ້າຍໄດ້ຖລົ່ມດ້ວຍລະເບີດເຮັດໃຫ້ຄົນເສັຽຊີວິດ 3 ຄົນ ແລະບາດເຈັບ 260 ຄົນ.

ແມບ ເຄເຟລຊິກີ ແມ່ນຄົນນຶ່ງໃນຜູ້ເຂົ້າແຂ່ງຂັນໃນປີ 2014 ນັ້ນ. ໃນຂະນະທີ່ລາວພວມແລ່ນຢູ່ນັ້ນ, ລາວໄດ້ຈາລຶກຊື່ຂອງຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນໄວ້ຢູ່ໃນຜ້າອັ້ງ(ຜ້າແຂນຄໍກັນເປື້ອນ). ຢ່າງເຫຼືອເຊື່ອ ແມບ ເຄເຟລຊິກີ ບໍ່ພຽງແຕ່ໄດ້ສຳເຣັດການແລ່ນແຂ່ງຂັນເທົ່ານັ້ນ ແຕ່ລາວໄດ້ເປັນຜູ້ຊະນະອີກດ້ວຍ. ແທ້ຈິງແລ້ວ, ລາວເປັນຊາວອະເມຣິກັນຄົນແລກທີ່ໄດ້ຮັບໄຊຊະນະພາຍໃນລະຍະ 29 ປີ. ລາວອາຍຸ 38 ປີ, ເປັນຄົນສູງອາຍຸທີ່ສຸດທີ່ໄດ້ໄຊຊະນະພາຍໃນລະຍະ 80 ປີຜ່ານມາ.

ໃນຂະນະທີ່ລາວຂ້າມເສັ້ນໄຊ, ຄະນະຜູ້ຊົມທັງຫຼາຍໄດ້ຮ້ອງຊົມເຊີຍ “ອະເມຣິກາ!”, ແມບ ເຄເຟລຊິກີ ໄດ້ຍົກມືຂຶ້ນດ້ວຍຄວາມຍິນດີແລະຄວາມມີໄຊ.

ໃນພຣະທັມຟີລິບປອຍ ບົດທີ 3, ອາຈານໂປໂລໄດ້ໃຊ້ການປຽບທຽບການແລ່ນແຂ່ງຂັນໃສ່ການເຂົ້າຍຶດເອົາຄວາມປາຖນາອັນແຮງກ້າຂອງເພິ່ນໃນການຕິດຕາມອົງພຣະເຢຊູ.

**ພຣະຄັມພີກ່າວວ່າແນວໃດ?** ຟີລິບປອຍ 3:12-21 (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ຟີລິບປອຍ 3:12-14</u>**

*12ບໍ່ໃຊ້ວ່າເຮົາໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເຣັດແລ້ວ ແຕ່ເຮົາກຳລັງບາກບັ່ນມຸ້ງໜ້າໄປ ເພື່ອຈະໄດ້ຮັບເອົາມາເປັນຂອງຕົນ ເໝືອນດັ່ງພຣະເຢຊູຄຣິດໄດ້ຊົງຮັບເຮົາໄວ້ເປັນຂອງພຣະອົງແລ້ວ. 13ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັຽ ແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງໜ້າ. 14ເຮົາກຳລັງບາກບັ່ນມຸ້ງໜ້າໄປສູ່ຫລັກໄຊເພື່ອຈະໄດ້ຮັບລາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດ ໃຫ້ໄປຮັບຢູ່ເບື້ອງເທິງ.*

ອາຈານໂປໂລ, ອັຄສາວົກຜູ້ຍິ່ງໃຫຍ່, ຮັບຮູ້ວ່າເພິ່ນບໍ່ແມ່ນຄົນທີ່ສົມບູນແບບ ເພິ່ນມີຄວາມກ້າວໜ້າໃນການຕິດຕາມພຣະເຢຊູ, ແຕ່ເພິ່ນບໍ່ໄດ້ຢຸດຄວາມພໍໃຈຢູ່ພຽງເທົ່ານັ້ນ. ດັ່ງນັ້ນເພິ່ນຈຶ່ງໄດ້ສືບຕໍ່ພະຍາຍາມ “ບາກບັ່ນມຸ້ງ

ໜ້າໄປ" (ຂໍ້ 12), "ໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງໜ້າ" (ຂໍ້ 13), ແລະສແວງຫາເປົ້າໝາຍ "ເຮົາກໍາລັງບາກບັ່ນມຸ້ງໜ້າໄປສູ່ຫລັກຊັຍເພື່ອຈະໄດ້ຮັບລາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດໃຫ້ໄປຮັບຢູ່ເບື້ອງເທິງ" (ຂໍ້ 14).

ຈົ່ງສັງເກດເບິ່ງອາຈານໂປໂລໄດ້ໃຊ້ສອງຄໍາສັບ "ລືມສິ່ງເຫຼົ່ານັ້ນ" ແລະ "ໂນ້ມຕົວອອກໄປຫາສິ່ງທັງຫຼາຍທີ່ຢູ່ເບື້ອງໜ້າ". ພວກເຮົາສາມາດລືມອະດີດເມື່ອໄດ້ຮັບການອະພັຍໂທດໄປແລ້ວໂດຍພຣະເຢຊູ. ອາຈານໂປໂລໄດ້ຂົ່ມເຫງຄຣິສຕຽນ ບາງພວກໄດ້ຖືກສັງຫານ(ເບິ່ງ ກິຈການ 22:4-5). ແຕ່ໂທດຂອງເພິ່ນໄດ້ຊົງຖືກອະພັຍ. ເພິ່ນໄດ້ລືມອະດີດທີ່ຜ່ານພົ້ນໄປແລ້ວ, ແລະພວກເຮົາກໍສົມຄວນຈະເຮັດເຊັ່ນນັ້ນເໝືອນກັນ.

- **ພວກເຮົາສົມຄວນລືມຄວາມລົ້ມເຫຼວໃນອະດີດ.** ມັນເປັນພຽງແຕ່ຫຼັງຈາກພວກເຮົາຖືກຍົກໂທດແລະສແວງຫາຄວາມຜິດໃຫ້ຖືກຕ້ອງເທົ່ານັ້ນທີ່ພວກເຮົາສາມາດລືມການລະເມີດຝ່າຝືນ, ແລ້ວແລ່ນຕໍ່ໄປຂ້າງໜ້າ. ສະນັ້ນພວກເຮົາບໍ່ຕ້ອງປັກໃຈໃສ່ອະດີດ. ພວກເຮົາຢ່າຍອມໃຫ້ຊາຕານກ່າວຫາໃສ່ໂທດພວກເຮົາໃນເມື່ອພຣະເຢຊູໄດ້ຊົງອະພັຍໂທດໃຫ້ແກ່ພວກເຮົາແລ້ວ (ເບິ່ງ ໂຣມ 8:33-34).
- **ຈົ່ງລືມຄວາມສໍາເຣັດໃນອະດີດ.** ອາຈານໂປໂລບາງຄັ້ງໄດ້ນັບແລ້ວນັບອີກເຖິງຄວາມສໍາເຣັດໃນພັນທະກິດຂອງເພິ່ນ (ເບິ່ງ 2 ໂກຣິນໂທ 11:22-12:4), ແຕ່ເພິ່ນບໍ່ໄດ້ໃຊ້ຊັຍຊະນະໃນອະດີດໃຫ້ເປັນການແກ້ຕົວໃນການສະແດງຄວາມໂອ້ອວດໃນປັດຈຸບັນ. ໃນທໍານອງດຽວກັນ, ພວກເຮົາສົມຄວນຂອບພຣະຄຸນພຣະເຈົ້າສໍາລັບພຣະພອນ ແລະຜົນປໂຍດທັງຫຼາຍ, ແຕ່ພວກເຮົາບໍ່ສົມຄວນຈະໃຊ້ການລົ້ມລຸກຄຸກຄານ ຫຼື ການສໍາເຣັດໃນອະດີດເປັນການແກ້ຕົວໃນການດໍາລົງຊີວິດດ້ວຍຄວາມເພິ່ງພໍໃຈ (ອີ່ມໃຈ) ໃນທຸກວັນນີ້.

ອະນາຄົດເດ ຈະເປັນຢ່າງໃດ? ພວກເຮົາຈະເດີນໜ້າແລະສແວງຫາລາງວັນຈາກພຣະເຈົ້າຢ່າງໃດ? ຈົ່ງຟັງຄໍາເວົ້າອັນງ່າຍໆຂອງອາຈານໂປໂລຄໍານຶ່ງ: "*ສິ່ງດຽວທີ່ຂ້າພະເຈົ້າເຮັດ*". ຄໍາວ່າ "ສິ່ງດຽວ" ຂອງອາຈານໂປໂລນັ້ນແມ່ນ**ພຣະເຢຊູ.** ເພິ່ນໄດ້ຕົກຫລຸມຮັກທັງໝົດໂດຍຂ່າວປະເສີດ(ຂໍ້ 12 ແລະ 14). ອາຈານໂປໂລບໍ່ໄດ້ລືມຄວາມມະທັສຈັນຂອງຂ່າວປະເສີດຈັກເທື່ອ, ພວກເຮົາກໍເຊັ່ນດຽວກັນນັ້ນລະ. ການເຕີບໃຫຍ່ທັງໝົດໃນດ້ານຈິດວິນຍານນັ້ນໄດ້ມາຈາກແຫລ່ງແຫ່ງຄວາມສັມພັນຂອງພວກເຮົາກັບອົງພຣະເຢຊູ.

| |
|---|
| ແມ່ນປະສົບການ ຫຼືການປະເຊີນໜ້າແນວໃດ ທີ່ໄດ້ຊ່ວຍໃຫ້ທ່ານເຕີບໃຫຍ່ໃນດ້ານຈິດວິນຍານ? |

## 2. ຟີລິບປອຍ 3:15-19

[15]*ເຮົາທັງປວງຊຶ່ງເປັນຜູ້ໃຫຍ່ຖ້ວນແລ້ວຄວນຄຶດຢ່າງນັ້ນ ແລະຖ້າເຈົ້າທັງຫລາຍຄຶດຢ່າງອື່ນ ພຣະເຈົ້າກໍຈະຊົງສໍາແດງສິ່ງນັ້ນແກ່ພວກເຈົ້າດ້ວຍ.* [16]*ແຕ່ພວກເຮົາເຖິງຍ່ານໃດແລ້ວ ກໍໃຫ້ພວກເຮົາດໍາເນີນຊື່ໄປຕາມນັ້ນ.* [17]*ພີ່ນ້ອງທັງຫລາຍເອີຍ, ຈົ່ງພາກັນເຮັດຕາມແບບຢ່າງຂອງເຮົາ ແລະຄອຍເບິ່ງຄົນເຫລົ່ານັ້ນທີ່ເຮັດຕາມແບບຢ່າງດຽວກັນ ເໝືອນດັ່ງເຈົ້າທັງຫລາຍໄດ້ເອົາພວກເຮົາເປັນຕົວຢ່າງແລ້ວ.* [18]*ເພາະວ່າມີຫລາຍຄົນທີ່ດໍາເນີນຊີວິດເປັນສັດຕຣູຕໍ່ໄມ້ກາງແຂນຂອງພຣະຄຣິດ ຊຶ່ງເຮົາໄດ້ບອກເຣື່ອງນີ້ແກ່ພວກເຈົ້າຫລາຍເທື່ອແລ້ວ ແລະບັດນີ້ຍັງບອກເຈົ້າອີກດ້ວຍນໍ້າຕາໄຫລ.*[19]*ປາຍທາງຂອງຄົນເຫລົ່ານັ້ນຄືຄວາມຈິບຫາຍ ພຣະຂອງເຂົາກໍຄືທ້ອງເຂົາເອງ ເຂົາຍົກເອົາການທີ່ໜ້າອັບອາຍຂຶ້ນມາໂອ້ອວດ ເຂົາສົນໃຈໃນວັດຖຸຝ່າຍໂລກ.*

ອາຈານໂປໂລ ໄດ້ຮັບຮູ້ວ່າການຕິດຕາມຜູ້ໃດນັ້ນເປັນສິ່ງສໍາຄັນ. ເພິ່ນໄດ້ບອກຊາວໂກຣິນໂທໃຫ້ຕິດຕາມຕົວຢ່າງຂອງເພິ່ນ, ເໝືອນດັ່ງເພິ່ນເອງໄດ້ຕິດຕາມພຣະເຢຊູ (ເບິ່ງ 1 ໂກຣິນໂທ 11:1). ໃນທີ່ນີ້ ເພິ່ນໄດ້ເນັ້ນໜັກເຖິງ

ຄຳຂວັນດຽວກັນກັບສິ່ງທີ່ເພິ່ນໄດ້ແນະນຳຊາວຟີລິບປອຍໃນວິທີການຈະເລີນເຕີບໃຫຍ່ໃນດ້ານຈິດວິນຍານ:

ເລີ້ມແລກ, ອາຈານໂປໂລໄດ້ໜູນໃຈຊາວຄຣິສຕຽນໃຫ້ຮັບຮອງເອົາພາບພິດແລະມູນຄ່າລາຄາຂອງເພິ່ນເອງ. ເພິ່ນໄດ້ນັບຕົນເອງໃນປໂຍກ "... ພວກເຮົາເຖິງຍ່ານໃດແລ້ວ..." ຂັ້ນທີສອງ, ອາຈານໂປໂລໄດ້ໃຫ້ຄຳແນະນຳແກ່ຊາວຟີລິບປອຍໃຫ້ "..ເຮັດຕາມແບບຢ່າງຂອງເຮົາ ແລະຄອຍເບິ່ງຄົນເຫລົ່ານັ້ນທີ່ເຮັດຕາມແບບຢ່າງດຽວກັນ ເໝືອນດັ່ງເຈົ້າທັງຫລາຍໄດ້ເອົາພວກເຮົາເປັນຕົວຢ່າງແລ້ວ." ຕົວຢ່າງທີ່ສັດຊື່ເຕັມໄປດ້ວຍຜູ້ທີ່ດຳລົງຊີວິດຕາມທີ່ອາຈານໂປໂລໄດ້ຂຽນໄວ້, ຊຶ່ງເຫັນຄວາມຈຳເປັນຂອງຄົນອື່ນຫຼາຍກວ່າຂອງຕົນເອງ (ເບິ່ງ 2:3-4), ບໍ່ຈົ່ມບໍ່ວ່າ, ບໍ່ຕໍ່ວ່າຕໍ່ຂານ (ເບິ່ງ ຂໍ້ 14), ແລະເສັຽສະລະຊີວິດຕົນເອງເພື່ອເຫດຜົນຂອງຂ່າວປະເສີດ (ເບິ່ງ ຂໍ້ 16-18). ນີ້ເປັນສິ່ງທີ່ສຳຄັນບໍ່ພຽງແຕ່ພວກເຮົາໄດ້ຍິນຄຳສອນທີ່ສົມບູນແບບເທົ່ານັ້ນ, ແຕ່ພວກເຮົາໄດ້ສັງເກດເຊັ່ນດຽວກັນໃນຄຳສອນໂດຍຜ່ານການດຳລົງຊີວິດຂອງຄົນອື່ນ.

ໃນພຣະທັມຟີລິບປອຍ ບົດທີ 3 ຂໍ້ 18-19, ອາຈານໂປໂລໄດ້ໃຫ້ຕົວຢ່າງທາງລົບຫຼາຍອັນ ຊຶ່ງພວກເຮົາບໍ່ສົມຄວນປະຕິບັດຕາມ. ເພິ່ນເອີ້ນວ່າ "ສັດຕຣູຂອງໄມ້ກາງແຂນຂອງພຣະເຢຊູ." ຄົນເຫຼົ່ານັ້ນທຳທ່າທາງປະຕິບັດຕາມໂດຍອາຊີບໃນຄວາມເຊື່ອຄຣິສຕຽນ, ແຕ່ຄວາມຈິງແລ້ວພວກເຂົາເປັນຜູ້ຖແລງແກ້ງເຮັດ, ຊຶ່ງເຮັດໃຫ້ເຂົາຕົກເປັນຄົນລໍ້ລວງ. ສັດຕຣູຂອງໄມ້ກາງແຂນບໍ່ໄດ້ເວົ້າໂອ້ອວດເຣື່ອງທີ່ພຣະເຢຊູໄດ້ຊົງກະທຳເພື່ອພວກເຂົາ. ກົງກັນຂ້າມ, ພວກເຂົາຄຸຍໂມ້ເຣື່ອງຄວາມສາມາດແລະຄວາມສຳເລັດຂອງຕົນເອງ. ການກະທຳຂອງພວກເຂົາບໍ່ໄດ້ຊີ້ໃຫ້ເຫັນເຖິງອາຊີບຂອງຕົນ. ດ້ວຍວ່າອາຊີບຂອງພວກເຂົາບໍ່ຖືກຕ້ອງ, ອາຈານໂປໂລໄດ້ບອກວ່າ "ບັ້ນທ້າຍຂອງເຂົາຄືຄວາມຫາຍຍານະ".

ຂໍ້ອ້າງດັ່ງກ່າວແມ່ນເປັນທີ່ຮູ້ຈັກສຳລັບການທີ່ກຳນົດໄວ້ໃນບາງຄຸນຄ່າຂອງຊີວິດ, ຊຶ່ງທັງຫມົດນັ້ນເປັນຂໍ້ຂັດແຍ່ງຕໍ່ຄວາມບໍຣິສຸດຂອງຄຣິສຕຽນດັ່ງຕໍ່ລົງໄປນີ້:

- "**ພຣະເຈົ້າຂອງພວກເຂົາແມ່ນພຸງຂອງພວກເຂົາ.**" ພວກເຂົາຕອບສນອງຕັນຫາ(ຄວາມຢາກ)ຂອງຕົນເອງ ແລະຄວາມພໍໃຈຂອງຕົນເອງ.
- "**ກຽດສັກສີຂອງພວກເຂົາແມ່ນຢູ່ໃນຄວາມອັບອາຍຂາຍໜ້າ.**" ພວກເຂົາສະແດງຄວາມໂອ້ອວດໃນສິ່ງທີ່ພວກເຂົາສົມຄວນມີຄວາມລະອາຍທັງກາຍແລະໃຈ.
- "**ພວກເຂົາຈົດຈໍ່ໃສ່ແຕ່ວັດຖຸສິ່ງຂອງໃນໂລກ.**" ພວກເຂົາມີຄວາມຕື່ນເຕັ້ນຕໍ່ສິ່ງໃນໂລກແລະບໍ່ສາມາດມຸ້ງຫວັງເອົາໃຈໃສ່ໃນອົງພຣະເຢຊູ, ໄມ້ກາງແຂນຂອງພຣະອົງ, ຫຼືການຄືນພຣະຊົນຂອງພຣະອົງ.

| |
|---|
| ພວກເຮົາສາມາດຕັ້ງໃຈວາງຕົວດ້ວຍວິທີໃດ ເພື່ອຮັບຜົນປໂຍດຈາກຕົວຢ່າງຂອງຄົນອື່ນ? |

### 3. ຟີລິບປອຍ 3:20-21

[20]*ແຕ່ບ້ານເມືອງຂອງເຮົາທັງຫລາຍນັ້ນຢູ່ໃນສວັນ ພວກເຮົາລໍຄອຍພຣະຜູ້ໂຜດໃຫ້ພົ້ນ ຊຶ່ງຈະສະເດັດມາຈາກສວັນ ຄື*
*ພຣະເຢຊູຄຣິດເຈົ້າ.* [21]*ພຣະອົງຈະຊົງປ່ຽນແປງຮ່າງກາຍອັນຕ່ຳຕ້ອຍຂອງພວກເຮົາ ໃຫ້ເປັນເໝືອນພຣະກາຍອັນຊົງ*
*ສງ່າຣາສີຂອງພຣະອົງ ດ້ວຍຣິດທານຸພາບຊຶ່ງເຮັດໃຫ້ພຣະອົງຊົງປາບສາຣະພັດລົງໃຕ້ບັງຄັບຂອງພຣະອົງ.*

ເລີ້ມແຕ່ຂໍ້ 20, ອາຈານໂປໂລໄດ້ທວນຄືນຫາແນວຄວາມຄິດຊຶ່ງພວກເຮົາສົມຄວນຈະຕ້ອງມີໃນຖານະເປັນຜູ້ຕິດຕາມພຣະເຢຊູ. ໂດຍສະເພາະ, ພວກເຮົາຕ້ອງດຳຣົງຊີວິດໃນແງ່ຂອງພົລເມືອງທີ່ແທ້ຈິງ: ຄືຊາວສວັນນັ້ນເອງ!

ໃນຂະນະທີ່ພວກເຮົາເຕີບໃຫຍ່ດ້ານຈິດວິນຍານ, ພວກເຮົາຍອມຮັບຮູ້ວ່າໂລກນີ້ບໍ່ແມ່ນບ້ານຖາວອນຂອງພວກເຮົາ ແລະພວກເຮົາຈະບໍ່ເຕີບໃຫຍ່ເຖິງຂັ້ນສົມບູນແບບຈົນກວ່າພວກເຮົາຈະເຖິງສວັນ. ບາງສິ່ງໃນຊີວິດນີ້ເປັນສາເຫດໃຫ້ພວກເຮົາ "ຄໍ່າຄວນພາຍໃນຕົວເຮົາເອງ" ເພາະວ່າພວກເຮົາຍັງບໍ່ເຖິງຈຸດໝາຍປາຍທາງເທື່ອ (ເບິ່ງ ໂຣມ 8:22-23). ພວກເຮົາເປັນຂອງສວັນ (ຄືເປັນພົລເມືອງຫຼືຊາວສວັນ).

ດ້ວຍເຫດນີ້ເອງ, ຄຸນຄ່າແລະຊີວິດຂອງພວກເຮົາ, ໃນຖານະຜູ້ຕິດຕາມພຣະເຢຊູ, ສົມຄວນຈະຊີ້ໄປຫາທິດທາງຂອງສວັນ. ໂດຍຜ່ານຊີວິດຂອງພວກເຮົາໃນໂລກ, ພວກເຮົາສາມາດສະແດງໃຫ້ຄົນອື່ນໄດ້ເຫັນພຣະເຈົ້າຂອງເຮົາ ແລະພຣະຣາຊອານາຈັກຂອງພຣະອົງ.

ຍິ່ງໄປກວ່ານັ້ນ, ພວກເຮົາລໍຖ້າອົງພຣະຜູ້ໄຖ່ ພຣະເຢຊູຄຣິດ ດ້ວຍຄວາມກະຫາຍ(ກະຕືລືລົ້ນ). ໃນວັນນຶ່ງ, ວັນນັ້ນພວກເຮົາຈະໄດ້ເຫັນອົງພຣະເຢຊູໜ້າຕໍ່ໜ້າ. ເມື່ອນັ້ນພຣະອົງຈະຊົງປ່ຽນແປງຖານະ(ຮ່າງກາຍ)ຂອງພວກເຮົາໃຫ້ເປັນສະພາບທີ່ຮຸ່ງເຮືອງເຫລືອງເຫລື້ອມສເມືອນພຣະກາຍ(ພຣະລັກສະນະ)ຂອງພຣະອົງ. ຄວາມຈະເຣີນສົມບູນແບບຂອງຄຣິສຕຽນແມ່ນການເຕີບໃຫຍ່ຄ້າຍຄືພຣະເຢຊູ. ແຕ່ລະວັນ, ໃນຂະນະທີ່ພວກເຮົາຕິດຕາມພຣະອົງ, ພວກເຮົາມີໂອກາດປັບປຸງຕົນເອງໃຫ້ເໝືອນພຣະອົງເທົ່າທີ່ຈະເຮັດໄດ້ ເປັນວິທີການທີ່ຈະເຖິງຈຸດສຸດຍອດເມື່ອພຣະອົງຊົງສະເດັດກັບມາອີກຄັ້ງທີສອງ.

ແຕ່ລະວັນແມ່ນໂອກາດສຳລັບພວກເຮົາທີ່ຈະກັບກາຍຄ້າຍຄືງພຣະເຢຊູ, ແລະແຕ່ລະວັນແມ່ນໃກ້ເຂົ້າໄປຫາວັນທີ່ພຣະອົງຈະສະເດັດຄືນມາ. ເຫດສະນັ້ນ, ຈົ່ງດຳເນີນຕໍ່ໄປ, ແລ່ນຕໍ່ມຸ້ງໜ້າສູ່ຫຼັກຊັຍຈົນກວ່າທ່ານຈະພົບພຣະອົງໜ້າຕໍ່ໜ້າ ຕາຕໍ່ຕາ.

| |
|---|
| ແມ່ນຫຍັງເຮັດໃຫ້ພຣະຄຳຂໍ້ນີ້ເປັນການທ້າທາຍ? ແມ່ນຫຍັງເຮັດໃຫ້ພຣະຄຳຂໍ້ນີ້ເປັນການໜູນໃຈ? |

## ນຳໃຊ້ໃນຊີວິດ

ທ່ານຈະກ້າວເດີນໜ້າແນວໃດເພື່ອໃຫ້ທ່ານກັບກາຍຄ້າຍຄືພຣະເຢຊູໃຫ້ຫຼາຍຂຶ້ນໃນວັນທີ່ໃກ້ຈະມາເຖິງນີ້?

ຈົ່ງພິຈາຣະນາເບິ່ງຄຳແນະນຳດັ່ງຕໍ່ລົງໄປນີ້:

- **ລືມອະດີດທີ່ຜ່ານພົ້ນໄປແລ້ວ.** ທ່ານມີອະດີດແນວໃດທີ່ສົມຄວນປ່ອຍວາງເພື່ອຈະໄດ້ແລ່ນຕົງໄປທາງໜ້າ? ທູນຂໍຕໍ່ພຣະເຈົ້າໃຫ້ຊົງປະທານຄວາມຮັ່ງມີຂອງພຣະຄຸນ ໃຫ້ທ່ານມີພລັງໃນການແລ່ນໄປໃນມື້ນີ້.
- **ມອງຄົນອື່ນດັ່ງພຣະເຢຊູຊົງເຫັນ.** ໃນຂະນະທີ່ທ່ານເບິ່ງຄົນຢູ່ໃນວັທນະທັມຂອງພວກເຮົາຊຶ່ງບໍ່ໄດ້ຕິດຕາມພຣະເຢຊູ, ທ່ານຕອບສນອງພວກເຂົາດ້ວຍຄວາມໂມໂຫບໍ່? ບໍ່ແຕກຕ່າງຫຍັງບໍ່? ຫຼືທ່ານມີຄວາມໂສກເສົ້າໂສກາ? ວິງວອນຕໍ່ພຣະເຈົ້າທຸກວັນໃຫ້ພຣະອົງຊົງໃຫ້ພລັງເລິກເຊິ່ງໃນຄວາມເປັນຫ່ວງຂອງທ່ານແກ່ເຂົາ.
- **ກຳຈັດນິສັຍແຫ່ງຄວາມບາບ.** ຈົ່ງປະເມີນຊີວິດຂອງທ່ານກ່ຽວກັບນິສັຍບາບຊຶ່ງເປັນອຸປສັກກີດກັ້ນບໍ່ໃຫ້ທ່ານຈະເຣີນເຕີບໃຫຍ່ໃນດ້ານຈິດວິນຍານ. ຮັບສາຣະພາບບາບ, ແລະກຳຈັດນິສັຍບໍ່ດີນັ້ນອອກຈາກຊີວິດຂອງທ່ານດ້ວຍຄວາມບຶກບືນ ເຂັ້ມແຂງ.

ທ່ານອາດຈະບໍ່ສາມາດແລ່ນ ມາຣາທອນ, ໂດຍບໍ່ໄດ້ຄິດພຽງນ້ອຍດຽວເຖິງການໄດ້ຮັບຊັຍຊະນະ. ແຕ່ທ່ານສາມາດແລ່ນການແຂ່ງຂັນປະຈຳວັນ ໂດຍຖານະເປັນອັຄສາວົກຂອງອົງພຣະເຢຊູ. ສິ່ງທີ່ທ່ານຕ້ອງທຳກໍພຽງແຕ່ລືມອະດີດທີ່ຜ່ານພົ້ນໄປ (ປ່ອຍວາງ), ຈິດຈໍ່ໃສ່ອົງພຣະເຢຊູ, ແລະມຸ້ງໜ້າໄປຈົນກວ່າເຖິງວັນທີ່ການປ່ຽນແປງຊີວິດຂອງທ່ານໄດ້ສຳເຣັດຮຽບຮ້ອຍບໍຣິບູນ (ວັນທີ່ໄດ້ເຫັນອົງພຣະເຢຊູໜ້າຕໍ່ໜ້ານັ້ນເອງ)